ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ : 5064 /ຍທຂ.

ນະຄອນຫລວງວຽງຈັນ, ວັນທີ 21. 4. 09

# ຂໍ້ຕົກລົງ

ວ່າດ້ວຍການອະນຸມັດນ້ຳໜັກລວມສູງສຸດ

ຂອງ ລົດບັນທຸກ (ລົດລາກ) 22 ລໍ້ / 06 ເພົາ.

- ອີງໃສ່ການຄິດໄລ່ ທາງດ້ານ ເຕັກນິກ ກ່ຽວກັບນ້ຳໜັກລວມສູງສຸດ ຂອງລົດບັນທຸກ 22 ລໍ້ 06 ເພົາ.
- ອີງຕາມການຕົກລົງເຫັນດີ ເປັນເອກະພາບ ຂອງກອງປະຊຸມ ຄັ້ງວັນທີ 11/04/2009.

## ລັດຖະມົນຕີ ວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຕົກລົງ:

ມາດຕາ 1. ອະນຸຍາດນ້ຳໜັກລວມສູງສຸດ ຂອງລົດບັນທຸກ, ລົດລາກ 22 ລໍ້ / 06 ເພົາ 41,400 ກິໂລ ລາຍລະອຽດດັ່ງນີ້:

- ຫົວລາກ

  ເພົາໜ້າ 1 = 4,600 ກິໂລ.

  ເພົາຫລັງ 1 = 8,200 ກິໂລ.

  ເພົາຫລັງ 2 = 8,200 ກິໂລ.

- ຫາງລາກ

  ເພົາຫລັງ 1 = 6,800 ກິໂລ.

  ເພົາຫລັງ 2 = 6,800 ກິໂລ.

  ເພົາຫລັງ 3 = 6,800 ກິໂລ.

ລວມນ້ຳໜັກສູງສຸດທັງໝົດ (ລົດ+ສິນຄ້າ) = 41,400 ກິໂລ.

ມາດຕາ 2. ຂໍ້ຕົກລົງສະບັບນີ້ ແມ່ນປ່ຽນແທນ ລົດລາກ 22 ລໍ້ / 06 ເພົາ ຂອງຂໍ້ກຳນົດ ສະບັບເລກທີ 849/ຄຂປກ, ລົງວັນທີ 05/03/2002.

ມາດຕາ 3. ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ແລະ ນະຄອນຫລວງວຽງຈັນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ມອບໃຫ້ກົມຂົນສົ່ງ ເປັນຜູ້ຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ມາດຕາ 4. ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີວ່າການ

ສົມມາດ ພົລເສນາ